# ການຂະຫຍາຍສິດເຂົ້າເຖິງປະກັນສຸຂະພາບສໍາລັບທຸກຄົນ

## (ລວມເຖິງຄົນເຂົ້າເມືອງທີ່ບໍ່ມີເອກະສານບັນທຶກ!)

**ນັບຕັ້ງແຕ່ເດືອນພະຈິກນີ້, ທຸກຄົນທີ່ອາໄສໃນລັດວໍຊິງຕັນຈະມີໂອກາດຊື້ປະກັນສຸຂະພາບ ແລະ ແຂ້ວຜ່ານ *Washington Healthplanfinder*, ບໍ່ວ່າຈະມີສະຖານະການເຂົ້າເມືອງແນວໃດກໍ່ຕາມ.**

**ລົງທະບຽນໃນວັນທີ 15 ທັນວາ ສໍາລັບປະກັນສຸຂະພາບທີ່ຈະເລີ່ມຕົ້ນໃນວັນທີ 1 ມັງກອນ 2024.**

washington healthplanfinder
click. compare. covered.

## ຄໍາສັບສໍາຄັນ

**ເບ້ຍປະກັນ:** ສະມາຊິກແຕ່ລະຄົນຈະຈ່າຍຄ່າທໍານຽມປະຈໍາເດືອນທີ່ເອີ້ນວ່າ ເບ້ຍປະກັນ. ລາຄາເບ້ຍປະກັນຂອງທ່ານແມ່ນຂຶ້ນກັບແຜນປະກັນສຸຂະພາບຂອງທ່ານ.

**ເງິນທີ່ຕ້ອງຈ່າຍກ່ອນ:** ປະກັນສຸຂະພາບຂອງທ່ານຈະເລີ່ມຊ່ວຍຈ່າຍເງິນສໍາລັບໃບຮຽກເກັບເງິນຂອງທ່ານຫຼັງຈາກທີ່ທ່ານ "ເຂົ້າເກນ ຈໍານວນເງິນທີ່ທ່ານຕ້ອງຈ່າຍກ່ອນ". ທຸກແຜນປະກັນຈະຈ່າຍເງິນສໍາລັບການດູແລເບິ່ງແຍງປ້ອງກັນກ່ອນທີ່ຈະເຂົ້າເກນເງິນທີ່ທ່ານຕ້ອງຈ່າຍກ່ອນ. **ແຜນປະກັນ Cascade Care** ຈະຈ່າຍເງິນສໍາລັບການບໍລິການຫຼາຍຂຶ້ນກ່ອນທີ່ຈະເຂົ້າເກນເງິນທີ່ທ່ານຕ້ອງຈ່າຍກ່ອນ. ການບໍລິການເຫຼົ່ານີ້ລວມເຖິງ:

- ການດູແລເບິ່ງແຍງແບບປ້ອງກັນ
- ການເຂົ້າພົບທ່ານໝໍທີ່ດູແລເບິ່ງແຍງຫຼັກເພື່ອປິ່ນປົວອາການເຈັບປ່ວຍ ຫຼື ອາການບາດເຈັບ
- ການບໍລິການສຸຂະພາບຈິດ
- ການກໍາກັບຢາທົ່ວໄປ
- ການດູແລເບິ່ງແຍງແບບຮີບດ່ວນ, ເມື່ອທ່ານຕ້ອງການການດູແລເບິ່ງແຍງໃນທັນທີ ແຕ່ບໍ່ມີອາການສຸກເສີນ ເຊັ່ນ: ພາວະຫົວໃຈວາຍ.

**ເງິນຮ່ວມຈ່າຍ ແລະ ເງິນປະກັນໄພຮ່ວມ:** ສິ່ງເຫຼົ່ານີ້ແມ່ນຄ່າໃຊ້ຈ່າຍທີ່ທ່ານຕ້ອງຈ່າຍເມື່ອທ່ານເຂົ້າພົບທ່ານໝໍ. ເງິນຮ່ວມຈ່າຍຂອງທ່ານແມ່ນຈໍານວນຄົງທີ່ ($1-$50). ເງິນປະກັນໄພຮ່ວມຂອງທ່ານແມ່ນອັດຕາສ່ວນຮ້ອຍຂອງຄ່າໃຊ້ຈ່າຍການບໍລິການ. ແຜນປະກັນສຸຂະພາບຂອງທ່ານຈະຈ່າຍເງິນສໍາລັບການເຂົ້າພົບສ່ວນທີ່ເຫຼືອຂອງທ່ານ.

## ເງື່ອນໄຂສິດ, ສະຖານະການເຂົ້າເມືອງ ແລະ ຄວາມປອດໄພ

### ຜູ້ໃດມີສິດ?

ຖ້າທ່ານອາໄສໃນລັດວໍຊິງຕັນ, ທ່ານສາມາດຊື້ປະກັນສຸຂະພາບຜ່ານ *Washington Healthplanfinder*, ເຖິງແມ່ນວ່າທ່ານເປັນຜູ້ອົບພະຍົບທີ່ບໍ່ມີເອກະສານບັນທຶກ. ທ່ານບໍ່ຈໍາເປັນຕ້ອງເປັນພົນລະເມືອງສະຫະລັດ, ມີບັດຂຽວ ຫຼື ເອກະສານເຂົ້າເມືອງປະເພດອື່ນໆ.

### ການຮັບປະກັນສຸຂະພາບຈະສົ່ງຜົນກະທົບຕໍ່ສະຖານະການເຂົ້າເມືອງ ຫຼື ການສະໝັກຂໍຄວາມເປັນພົນລະເມືອງຂອງຂ້າພະເຈົ້າບໍ?

ການຂໍປະກັນສຸຂະພາບຈະບໍ່ສົ່ງຜົນກະທົບຕໍ່ສະຖານະການເຂົ້າເມືອງ ຫຼື ການສະໝັກຂໍຄວາມເປັນພົນລະເມືອງສໍາລັບທ່ານ, ຄອບຄົວຂອງທ່ານ ຫຼື ຜູ້ໃດກໍ່ຕາມທີ່ອາໄສກັບທ່ານ.

### ການໄດ້ຮັບປະກັນສຸຂະພາບຈະເຮັດໃຫ້ຂ້າພະເຈົ້າເປັນ "ພາລະຂອງສາທາລະນະ" ບໍ?

ການສະໝັກຂໍ ຫຼື ການໄດ້ຮັບປະກັນສຸຂະພາບ ແລະ ການໄດ້ຮັບຄວາມຊ່ວຍເຫຼືອດ້ານການເງິນເພື່ອຈ່າຍສໍາລັບການປະກັນໄພແມ່ນຈະບໍ່ເຮັດໃຫ້ຄົນໃດໜຶ່ງເປັນ "ພາລະຂອງສາທາລະນະ". ນີ້ໝາຍຄວາມວ່າມັນຈະບໍ່ສົ່ງຜົນກະທົບຕໍ່ສະຖານະການເຂົ້າເມືອງ ຫຼື ການສະໝັກຂໍຄວາມເປັນພົນລະເມືອງສໍາລັບທ່ານ, ຄອບຄົວຂອງທ່ານ ຫຼື ຜູ້ໃດກໍ່ຕາມທີ່ອາໄສກັບທ່ານ.

### ຂ້າພະເຈົ້າບໍ່ມີເອກະສານບັນທຶກ. ຂໍ້ມູນຂອງຂ້າພະເຈົ້າປອດໄພບໍ?

ຄວາມປອດໄພຂອງທ່ານເປັນສິ່ງສໍາຄັນສໍາລັບພວກເຮົາ. **ຂໍ້ມູນຂອງທ່ານຈະບໍ່ຖືກໃຊ້ເພື່ອບັງຄັບໃຊ້ກົດໝາຍການເຂົ້າເມືອງ.**

ກົດໝາຍຂອງລັດຖະບານກາງ ແລະ ຂອງລັດຈະປົກປ້ອງຄວາມເປັນສ່ວນຕົວຂອງປະຊາຊົນທີ່ສະໝັກຂໍປະກັນສຸຂະພາບຜ່ານ *Washington Healthplanfinder*. ຂໍ້ມູນກ່ຽວກັບສະຖານະການເຂົ້າເມືອງແມ່ນຈະຖືກໃຊ້ເພື່ອກໍານົດເງື່ອນໄຂສິດສໍາລັບການຄຸ້ມຄອງເທົ່ານັ້ນ ແລະ ບໍ່ແມ່ນເພື່ອບັງຄັບໃຊ້ກົດໝາຍການເຂົ້າເມືອງ.

# ຄຳຖາມທີ່ຖືກຖາມເລື້ອຍໆ

## ການລົງທະບຽນ

### "ການລົງທະບຽນ" ແມ່ນຫຍັງ?

ທ່ານຈະລົງທະບຽນໃນການປະກັນສຸຂະພາບໂດຍຄັດເລືອກແຜນປະກັນຜ່ານ *Washington Healthplanfinder*, ຈາກນັ້ນກໍ່ຈ່າຍເງິນສຳລັບແຜນປະກັນສຸຂະພາບຂອງທ່ານ.

### ຂ້າພະເຈົ້າຈະສາມາດລົງທະບຽນໄດ້ເມື່ອໃດ? ແມ່ນຫຍັງຄື "ການລົງທະບຽນແບບເປີດ"?

ທຸກຄົນສາມາດລົງທະບຽນສຳລັບການປະກັນສຸຂະພາບທີ່ *Washington Healthplanfinder* ລະຫວ່າງ**ວັນທີ 1 ພະຈິກ** ແລະ **ວັນທີ 15 ມັງກອນ**. ຊ່ວງເວລານີ້ແມ່ນເອີ້ນວ່າ**ການລົງທະບຽນແບບເປີດ**. ການລົງທະບຽນແບບເປີດແມ່ນຈັດຂຶ້ນທຸກໆປີ.

### ຈະເຮັດແນວໃດ ຖ້າຂ້າພະເຈົ້າພາດການລົງທະບຽນແບບເປີດ? "ການລົງທະບຽນແບບພິເສດ" ແມ່ນຫຍັງ?

ບາງຄົນສາມາດລົງທະບຽນໃນຊ່ວງເວລາອື່ນ. ນີ້ແມ່ນເອີ້ນວ່າ**ການລົງທະບຽນແບບພິເສດ**.

ຖ້າທ່ານມີການປ່ຽນແປງໃນຊີວິດ (ການເສຍວຽກ, ການປ່ຽນແປງໃນສະຖານະການແຕ່ງງານ, ການເກີດລູກ ແລະ ອື່ນໆ) ຫຼື ເປັນຜູ້ມີລາຍໄດ້ຕ່ຳ, ທ່ານອາດມີສິດລົງທະບຽນນອກການລົງທະບຽນແບບເປີດ.

### ຂ້າພະເຈົ້າຈຳເປັນຕ້ອງມີຫຍັງເພື່ອລົງທະບຽນ?

*Washington Healthplanfinder* ຈະຂໍຂໍ້ມູນກ່ຽວກັບທ່ານ ແລະ ຄອບຄົວຂອງທ່ານເພື່ອຕັດສິນເງື່ອນໄຂສິດຂອງທ່ານ.

### ມັນຈະໃຊ້ເວລາດົນສ່ຳໃດ?

ການສະໝັກສາມາດໃຊ້ເວລາປະມານ 1 ຊົ່ວໂມງ.

### ຂ້າພະເຈົ້າຈະສາມາດຊອກຫາການຊ່ວຍເຫຼືອສຳລັບການລົງທະບຽນໄດ້ຢູ່ໃສ? ມີການຊ່ວຍເຫຼືອເປັນພາສາອື່ນບໍ?

ການຊ່ວຍເຫຼືອສຳລັບການລົງທະບຽນທັງມົດແມ່ນມີໃຫ້ໂດຍ**ບໍ່ເສຍຄ່າ***. ນີ້ແມ່ນຊ່ອງທາງທີ່ຈະຂໍການຊ່ວຍເຫຼືອ:

**ໂທ**

**1-855-923-4633**
**TTY/TDD: 1-855-627-9604**
*ການຊ່ວຍເຫຼືອແມ່ນມີໃຫ້ຫຼາຍກວ່າ 200 ພາສາ.*

**ພົວພັນ**

**ນັດໝາຍກັບຜູ້ນຳທາງສຸຂະພາບ, ນາຍໜ້າ ຫຼື ແຫຼ່ງຊ່ວຍເຫຼືອທີ່ໄວ້ໃຈໄດ້ໃນຊຸມຊົນຂອງທ່ານ.**

**ເຂົ້າເບິ່ງ**

**www.wahealthplanfinder.org**

***ຫຼື ສະແກນລະຫັດ QR ດ້ວຍກ້ອງຖ່າຍຮູບຂອງທ່ານ***

**ເພື່ອເບິ່ງແຜນປະກັນລ່ວງໜ້າໃນພື້ນທີ່ຂອງທ່ານ, ກະລຸນາເຂົ້າເບິ່ງ wahealthplanfinder.org. ໃຊ້ເຄື່ອງມື "ຄົ້ນຫາ ແລະ ປຽບທຽບແຜນປະກັນ".**

*ຖ້າທ່ານບໍ່ຮູ້ວ່າຄົນໃດໜຶ່ງໄດ້ຮັບການຢັ້ງຢືນເພື່ອຊ່ວຍເຫຼືອທ່ານ ຫຼື ບໍ່ ຫຼື ຖ້າພວກເຂົາຂໍໃຫ້ຈ່າຍເງິນສຳລັບການບໍລິການຂອງພວກເຂົາ, ກະລຸນາໂທຫາສູນຊ່ວຍເຫຼືອລູກຄ້າຂອງ *Washington Healthplanfinder* ທີ່ **1-855-WAFINDER**.



# ຄຳຖາມທີ່ຖືກຖາມເລື້ອຍໆ

## ຄ່າໃຊ້ຈ່າຍປະກັນສຸຂະພາບ

### ປະກັນສຸຂະພາບມີຄ່າໃຊ້ຈ່າຍເທົ່າໃດ?

ຕົ້ນທຶນຂອງການຊື້ປະກັນສຸຂະພາບແມ່ນຂຶ້ນກັບປັດໃຈຕ່າງໆ ເຊັ່ນ: ລາຍໄດ້ຂອງທ່ານ, ຂະໜາດຄອບຄົວ ແລະ ບ່ອນທີ່ທ່ານອາໄສ.

ຊອກຫາ ແລະ ປຽບທຽບແຜນປະກັນໃນ **wahealthplanfinder.org** ຫຼື ເຮັດວຽກກັບແຫຼ່ງຊ່ວຍເຫຼືອທີ່ໄວ້ໃຈໄດ້ໃນຊຸມຊົນຂອງທ່ານ ເພື່ອຮຽນຮູ້ວ່າທ່ານຕ້ອງເສຍເງິນເທົ່າໃດສຳລັບແຜນປະກັນ.

### ຄຳເວົ້າເຫຼົ່ານີ້ໝາຍຄວາມວ່າແນວໃດ: ເບ້ຍປະກັນ, ເງິນທີ່ຕ້ອງຈ່າຍກ່ອນ, ເງິນປະກັນໄພຮ່ວມ ແລະ ເງິນຮ່ວມຈ່າຍ?

**ເບ້ຍປະກັນ:** ສະມາຊິກແຕ່ລະຄົນຈະຈ່າຍຄ່າທຳນຽມປະຈຳເດືອນທີ່ເອີ້ນວ່າ ເບ້ຍປະກັນ. ລາຄາເບ້ຍປະກັນຂອງທ່ານແມ່ນຂຶ້ນກັບແຜນປະກັນສຸຂະພາບຂອງທ່ານ.

**ເງິນທີ່ຕ້ອງຈ່າຍກ່ອນ:** ປະກັນສຸຂະພາບຂອງທ່ານຈະເລີ່ມຊ່ວຍຈ່າຍເງິນສຳລັບໃບຮຽກເກັບເງິນຂອງທ່ານຫຼັງຈາກທີ່ທ່ານ "ເຂົ້າເກນ ຈຳນວນເງິນທີ່ທ່ານຕ້ອງຈ່າຍກ່ອນ". ທຸກແຜນປະກັນຈະຈ່າຍເງິນສຳລັບລາຍການໃດໜຶ່ງ, ເຊັ່ນ: ການກວດສຸຂະພາບ, ກ່ອນທີ່ຈະເຂົ້າເກນເງິນທີ່ຕ້ອງຈ່າຍກ່ອນ

**ເງິນຮ່ວມຈ່າຍ ແລະ ເງິນປະກັນໄພຮ່ວມ:** ສິ່ງເຫຼົ່ານີ້ແມ່ນຕົ້ນທຶນທີ່ທ່ານຕ້ອງຈ່າຍ ເມື່ອທ່ານເຂົ້າພົບທ່ານໝໍ. ເງິນຮ່ວມຈ່າຍຂອງທ່ານແມ່ນຈຳນວນຄົງທີ່ ($1-$50). ເງິນປະກັນໄພຮ່ວມແມ່ນອັດຕາສ່ວນຮ້ອຍຂອງຕົ້ນທຶນການບໍລິການ. ແຜນປະກັນສຸຂະພາບຂອງທ່ານຈະຈ່າຍເງິນສຳລັບການເຂົ້າພົບສ່ວນທີ່ເຫຼືອ.

### ແມ່ນຫຍັງຄືຄ່າໃຊ້ຈ່າຍ "ຕົວຈິງ"?

ຄ່າໃຊ້ຈ່າຍຕົວຈິງ (ເງິນທີ່ຕ້ອງຈ່າຍກ່ອນ, ເງິນຮ່ວມຈ່າຍ ແລະ ເງິນຮ່ວມປະກັນໄພ) ໝາຍເຖິງຈຳນວນເງິນທີ່ທ່ານຕ້ອງຈ່າຍ ເມື່ອທ່ານເຂົ້າພົບທ່ານໝໍ.

## ການເລືອກແຜນປະກັນ

### ມີແຜນປະກັນສຸຂະພາບຫຍັງພ້ອມໃຫ້ບໍລິການແດ່?

ມີແຜນປະກັນສຸຂະພາບສາມລະດັບທີ່ພ້ອມໃຫ້ບໍລິການຜ່ານ *Washington Healthplanfinder*. ທອງແດງ, ເງິນ ແລະ ຄຳ.

ຈຳນວນເງິນທີ່ບໍລິສັດປະກັນສຸຂະພາບຂອງທ່ານຈະຈ່າຍແມ່ນຂຶ້ນກັບລະດັບທີ່ທ່ານເລືອກ. ໂດຍທົ່ວໄປແລ້ວ, ແຜນປະກັນປະເພດທອງແດງຈະຈ່າຍປະມານ 60%, ແຜນປະກັນປະເພດເງິນຈະຈ່າຍປະມານ 70% ແລະ ແຜນປະກັນປະເພດຄຳຈະຈ່າຍປະມານ 80% ຂອງໃບຮຽກເກັບເງິນທາງການແພດຂອງທ່ານ.

**ທອງແດງ:** ແຜນປະກັນເຫຼົ່ານີ້ມີຕົ້ນທຶນໜ້ອຍກວ່າໃນແຕ່ລະເດືອນ ແຕ່ຈະຈ່າຍເງິນໜ້ອຍກວ່າສຳລັບຄ່າໃຊ້ຈ່າຍເມື່ອທ່ານຕ້ອງການການດູແລເບິ່ງແຍງ.

**ເງິນ:** ແຜນປະກັນເຫຼົ່ານີ້ຄອບຄຸມຄ່າໃຊ້ຈ່າຍໄດ້ຫຼາຍຂຶ້ນເມື່ອທ່ານຕ້ອງການການດູແລເບິ່ງແຍງ ແຕ່ອາດມີຕົ້ນທຶນສູງກວ່າ. ຖ້າທ່ານເຂົ້າເກນສຳລັບ Cascade Care Savings, ແຜນປະກັນເຫຼົ່ານີ້ອາດມີຕົ້ນທຶນໜ້ອຍກວ່າແຜນປະກັນປະເພດທອງແດງ.

**ຄຳ:** ແຜນປະກັນເຫຼົ່ານີ້ມີຕົ້ນທຶນຫຼາຍຂຶ້ນຕໍ່ເດືອນ ແຕ່ຈະຈ່າຍເງິນຫຼາຍຂຶ້ນສຳລັບຄ່າໃຊ້ຈ່າຍ ເມື່ອທ່ານຕ້ອງການການດູແລເບິ່ງແຍງ. ຖ້າທ່ານເຂົ້າເກນສຳລັບ Cascade Care Savings ແລະ ມີຄວາມຕ້ອງການດ້ານການດູແລເບິ່ງແຍງສຸຂະພາບຫຼາຍ, ແຜນປະກັນເຫຼົ່ານີ້ອາດເໝາະສົມດີ.

### ຂ້າພະເຈົ້າຈະໄດ້ຮັບທ່ານໝໍທີ່ດີກວ່າບໍ ຖ້າຂ້າພະເຈົ້າເລືອກແຜນປະກັນປະເພດເງິນ ຫຼື ຄຳ?

ບໍ່. ຄຸນນະພາບຂອງການດູແລເບິ່ງແຍງແມ່ນຄືກັນສຳລັບແຜນປະກັນທັງໝົດ.

washington healthplanfinder
click. compare. covered.

**ຊອກຫາໂລໂກ້ຂອງ Cascade Care.**
ແຜນປະກັນ Cascade Care ຈະໃຫ້ຄຸນຄ່າຫຼາຍຂຶ້ນໃນຕົ້ນທຶນທີ່ຕ່ຳລົງ. ນັ້ນໝາຍຄວາມວ່າ ເງິນເບ້ຍປະກັນຂອງທ່ານຈະໄດ້ເຮັດໃຫ້ທ່ານໄດ້ຮັບຫຼາຍກວ່າເມື່ອກ່ອນ!

CASCADE CARE